ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຫ້ອງການ

ເລກທີ 2951 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2026

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 030/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 4883/ສສກ, ລົງວັນທີ 23 ກັນຍາ 2022;
- ອີງຕາມ ແຜນຄາດຄະເນງົບປະມານຈັດຊື້-ຈັດຈ້າງ ປະຈຳປີ 2026 ຂອງສຳນັກກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 431/ຫກ, ລົງວັນທີ 28 ກຸມພາ 2026;

1. ຫ້ອງການກະຊວງສຶກສາທິການ ແລະ ກິລາ ໄດ້ຮັບອະນຸມັດງົບປະມານປະຈຳສົກປີ 2026 ເພື່ອການຈັດຊື້-ຈັດຈ້າງ ການຈັດຊື້ເຄື່ອງຮັບໃຊ້ຫ້ອງການ ປະເພດ ເຈ້ຍ A4, ເຈ້ຍ Legal ແລະ ນ້ຳມຶກປິ້ນເຕີ ປະຈຳງວດທີ 1 ແລະ ທີ 2 (6 ເດືອນຕົ້ນປີ) ຂອງສຳນັກກະຊວງສຶກສາທິການ ແລະ ກິລາ.
2. ຫ້ອງການກະຊວງສຶກສາທິການ ແລະ ກິລາ ໃນນາມເຈົ້າຂອງໂຄງການ ຂໍເຊີນບໍລິສັດຂອງທ່ານ ເຂົ້າຮ່ວມຍື່ນຊອງປະມູນ ການຈັດຊື້ເຄື່ອງຮັບໃຊ້ຫ້ອງການ ປະເພດ ເຈ້ຍ A4, ເຈ້ຍ Legal ແລະ ນ້ຳມຶກປິ້ນເຕີ ປະຈຳງວດທີ 1 ແລະ ທີ 2 (6 ເດືອນຕົ້ນປີ) ຂອງສຳນັກກະຊວງສຶກສາທິການ ແລະ ກິລາ, ໃນນີ້ໄລຍະເວລາໃນການສະໜອງສິນຄ້າ ແມ່ນເລີ່ມແຕ່ ວັນທີ 15-30 ສິງຫາ 2026 (15 ວັນ).
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາມີນາ 2019.
4. ຊອງປະມູນຕ້ອງສົ່ງຄະນະຮັບຜິດຊອບກ່ອນເວລາ 09: 00 ໂມງ ຂອງ ວັນທີ 15 ກໍລະກົດ 2026 ທີ່ຫ້ອງປະຊຸມ 405 ຫ້ອງການກະຊວງສຶກສາທິການ ແລະ ກິລາ ເຂດ ບ້ານ ຊຽງຍືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ ເບີໂທລະສັບ 021 216004, 020 54366695 ແລະ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09: 00 ໂມງ ວັນທີ 15 ກໍລະກົດ 2026 ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.

ຫົວໜ້າຫ້ອງການ

ຮສ. ປອ. ຫຼ້າວັນ ວົງຄຳຊາວ